# ລາຍລະອຽດການຮັບນັກສຶກສາປະລິນຍາຕີ
# ມະຫາວິທະຍາໄລຊູໂຈ ລາວ ສົກປີ 2024

# Lao Suzhou University of 2024 undergraduate enrollment prospectus

# 老挝苏州大学 2024 年本科专业
# 招生简章






สแกนด้วย CamScanner

**I. ສະພາຍບລວມຂອງມະຫາວິທະຍາໄລ**

ມະຫາວິທະຍາໄລ ຊູໂຈ ລາວ (**Lao Soochow University Sole Limited** ເວບໄຊໂຮງຮຽນ **http://laowo.suda.edu.cn)** ແມ່ນມະຫາວິທະຍາໄລແຫ່ງທຳອິດຂອງຕ່າງປະເທດທີ່ລັດທະບານລາວ ໄດ້ອະນຸຍາດໃຫ້ສ້າງຕັ້ງໃນລາວ ແລະ ກໍເປັນມະຫາວິທະຍາໄລແຫ່ງທຳອິດຂອງຈີນ ທີ່ລັດທະບານຈີນ ໄດ້ອະນຸຍາດໃຫ້ລົງທຶນສ້າງຕັ້ງ ເປັນນິຕິບຸກຄົນ ຢູ່ຕ່າງປະເທດ, ເຊິ່ງມີສຳໜັກງານຕັ້ງຢູ່ ນະຄອນຫຼວງວຽງຈັນ ສ ປປ ລາວ ແລະ ມີເນື້ອທີ່ທັງໝົດລວມ 24 ເຮັກຕ້າ.

ມະຫາວິທະຍາໄລ ຊູໂຈ ລາວ ລົງທຶນສ້າງຕັ້ງໂດຍ ມະຫາວິທະຍາໄລ ຊູໂຈ ຈີນ, ນຳໃຊ້ຮູບແບບ ແລະ ວິທີການສິດສອນຢ່າງມີຄຸນນະພາບ ເຕັມຮູບແບບ ຈາກ ສປ ຈີນ, ໂດຍປະຕິບັດຕາມການຄິດໄລລະບົບໜ່ວຍກິດ, ພັດທະນາບຸກຄະລາກອນທີ່ມີຄວາມສາມາດພິເສດ ແລະ ມີຄວາມສາມາດດ້ານເຕັກນິກວິຊາສະເພາະທາງ ໂດຍມີວິໄສທັດລະດັບສາກົນ ເກັ່ງທັງພາສາລາວ ແລະ ພາສາຈີນ ແລະ ຍັງມີຄວາມຮູ້ຄວາມສາມາດທາງດ້ານວິຊາຊີບ ເພື່ອສົ່ງເສີມການແລກປ່ຽນຮ່ວມມື ທາງດ້ານເສດຖະກິດ ວັດທະນະທຳວິທະຍາສາດ ແລະ ເຕັກໂນໂລຊີ ລະຫວ່າງ ລາວ-ຈີນ ແລະ ບັນດາປະເທດອື່ນໆ ໃນພາກພື້ນອິນດູຈີນ.

ມະຫາວິທະຍາໄລ ຊູໂຈ ລາວ ໄດ້ຈັດຕັ້ງການຮຽນ-ການສອນ ມາແລ້ວເປັນເວລາ 12 ປີ, ການວາງແຜນພັດທະນາໃນອີກ 10 ປີ ຂ້າງໜ້າ, ມະຫາວິທະຍາໄລ ຊູໂຈ ລາວ ຈະສືບຕໍ່ປະຕິບັດຕາມນະໂຍບາຍຂອງກະຊວງສຶກສາທິການ ຂອງສອງປະເທດ ລາວ-ຈີນ, ຈະພັດທະນາໃຫ້ກາຍເປັນສະຖານການສຶກສາທີ່ມີວຸດທິການສຶກສາ ລະດັບອະນຸປະລິນຍາ, ປະລິນຍາຕີ, ປະລິນຍາໂທ ແລະ ປະລິນຍາເອກ, ພ້ອມດຽວກັນນັ້ນ, ຍັງມີລະບົບການຮຽນຝຶກອົບຮົມບຳລຸງ ໂດຍເນັ້ນທາງດ້ານພາສາຈີນໂດຍກົງ, ສ້າງ ສາຂາວິຊາເສດຖະສາດ, ການຄຸ້ມຄອງ, ພາສາ, ການທ່ອງທ່ຽວ, ສະຖາປັດ, ຂົນສົ່ງ, ການຄົມມະນາຄົມທາງລົດໄຟ, ກະສິກຳ, ອຸດສາຫະກຳ, ການແພດ ແລະ ສາຂາວິຊາອື່ນໆ ທີ່ສອດຄ່ອງກັບການພັດທະນາເສດຖະກິດສັງຄົມ ຂອງ ສປປ ລາວ, ປະເທດອາຊຽນ ແລະ ປະເທດ ຈີນ, ກາຍເປັນມະຫາວິທະຍາໄລ ທີ່ມີຊື່ສຽງໂດ່ງດັງ ໃນອາຊີຕາເວັນອອກສຽງໃຕ້.

**I. Overview of the school**

Lao Soochow University (Lao Soochow University Sole Limited) http://laowo.suda.edu.cn) is the first foreign-funded university approved by the Lao government and the first overseas university approved by the Chinese government. It is located in Vientiane, capital of Laos, with a campus covering an area of 24 hectares.

Founded by Soochow University of China, Lao Soochow University makes full use of China's high-quality educational resources and fully implements the credit system to train elites and specialized technical personnel with an international vision, fluent in the languages of Laos and China and solid professional knowledge, and promotes economic, cultural, scientific and technological cooperation and exchanges between Laos and other countries on the Indo-China Peninsula and China.

Lao Soochow University has been operating in Laos for 12 years. In the next 10 years, according to the policies of the Ministry of Education of China and Laos, Lao



สแกนด้วย CamScanner

Soochow University will develop into a college, undergraduate and postgraduate education with Chinese language training as the main training system. To set up a university with economic, management, language, tourism, architecture, logistics, rail transit, agriculture, industry, medicine and other majors that are compatible with the economic and social development of Laos, ASEAN and China, and have certain influence in Southeast Asia.

## 一、 学校概况

老挝苏州大学（Lao Soochow University Sole Limited，学校网址：http://laowo.suda.edu.cn）是老挝政府批准设立的第一所外资大学，也是中国政府批准设立的第一所境外大学，校址位于老挝首都万象市，校园面积 24 公顷。

老挝苏州大学由中国苏州大学创办，充分利用中国优质教育资源，全面实行学分制，培养具有国际化视野、通晓老中两国语言、专业知识扎实的精英和专门技术人才，促进老挝及中南半岛各国和中国的经济、文化和科技合作交流。

老挝苏州大学已经在老挝办学 12 年。未来的 10 年规划中，老挝苏州大学将遵照中老两国教育部政策，发展成为一所具有专科、本科、研究生学历教育，拥有以汉语言培训为主的培训体系，开设具有与老挝、东盟及中国经济、社会发展相适应的经济、管理、语言、旅游、建筑、物流、轨道交通、农业、工业、医学类等专业，在东南亚地区有一定影响力的大学。

## II. ລັກສະນະຂອງມະຫາວິທະຍາໄລ, ທີ່ຕັ້ງສຳໜັກງານ, ຮູບແບບວິທີ ແລະ ການກຳນົດປີຮຽນສ້າງບຸກຄະລາກອນ, ສະຖານທີ່ຮຽນ, ໃບປະກາສະນີຍະບັດ ແລະ ການຂຶ້ນທະບຽນຮັບຮອງວຸດທິການສຶກສາ

1. ລັກສະນະຂອງມະຫາວິທະຍາໄລ: ລົງທຶນສ້າງຕັ້ງໂດຍມະຫາວິທະຍາໄລ ຊູໂຈ ຈີນ, ໄດ້ຮັບອະນຸມັດໂດຍກະຊວງສຶກສາທິການ ຂອງສອງປະເທດລາວ-ຈີນ, ໂດຍໄດ້ຮັບສິດທິພິເສດຈາກລັດຖະບານລາວ ແລະ ເປັນສະຖານການສຶກສາລະດັບປະລິນຍາຕີ, ນິຕິບຸກຄົນ ທີ່ໄດ້ຮັບທຶນຈາກຕ່າງປະເທດ ຢູ່ ສ ປປ ລາວ ແຫ່ງດຽວ ແລະ ໄດ້ຮັບການຂຶ້ນທະບຽນຮັບຮອງວຸດທິການສຶກສາ ຈາກສູນບໍລິການ ການສຶກສາຕໍ່ຕ່າງປະເທດ ກະຊວງສຶກສາທິການ ສປ ຈີນ.

2. ທີ່ຕັ້ງສຳໜັກງານ: ບ້ານຊຽງດາ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສປປ ລາວ.

3. ຮູບແບບວິທີ ແລະ ການກຳນົດປີຮຽນຂອງການສ້າງບຸກຄະລາກອນ: ລະບົບປົກກະຕິແບບເຕັມເວລາ, ການຮຽນໂດຍຄິດໄລຕາມລະບົບໜ່ວຍກິດ, ໂດຍພື້ນຖານກຳນົດຮຽນ 4 ປີ, ກຳນົດສູງສຸດບໍ່ໃຫ້ເກີນພາຍໃນເວລາ 6 ປີ.

4. ສະຖານທີ່ຮຽນ: ໂດຍຫຼັກໆແລ້ວ ຮຽນຢູ່ ວິທະຍາເຂດນະຄອນຫຼວງວຽງຈັນ ສປປ ລາວ; ອີງຕາມລະບຽບຂອງກະຊວງສຶກສາທິການ ສປ ຈີນ ວ່າດ້ວຍການສຶກສາຕໍ່ຕ່າງປະເທດ ໂດຍຈະມີບາງສາຂາວິຊາຈຳຕ້ອງໄປສຶກສາຢູ່ ສປ ຈີນ.



สแกนด้วย CamScanner

5.ໃບປະກາສະນີຍະບັດ: ຜູ້ທີ່ສະເໜີ ຂໍອອກໃບປະກາສະນີຍະບັດ ຕ້ອງສຳເລັດ ຜ່ານທຸກເງື່ອນໄຂ ແລະ ຮຽນຄົບທຸກວິຊາ ຕາມຈຳນວນໜ່ວຍກິດ ທີ່ກຳນົດໄວ້ ຈຶ່ງຈະໄດ້ຮັບການອະນຸມັດອອກປະກາສະນີຍະບັດ ຈາກກະຊວງສຶກສາທິການ ແລະ ກິລາ ສປປ ລາວ ແລະ ໃບວຸດທິການສຶກສາ ຈາກ ມະຫາວິທະຍາໄລ ຊູໂຈລາວ.

6. ການຂຶ້ນທະບຽນຮັບຮອງວຸດທິການສຶກສາ: ມະຫາວິທະຍາໄລ ຊູໂຈ ລາວ ເປັນມະຫາວິທະຍາໄລ ທີ່ຂຶ້ນຢູ່ໃນ "ລາຍຊື່ທີ່ໄດ້ຮັບອະນຸຍາດການສຶກສາຕໍ່ຕ່າງປະເທດ" ຂອງສູນບໍລິການ ການສຶກສາຕໍ່ຕ່າງປະເທດ ກະຊວງສຶກສາທິການ ສປ ຈີນ ໂດຍໄດ້ຮັບການອະນຸມັດ ຈາກລັດຖະບານຈີນ ເຊິ່ງມີການຮັບຮອງວຸດທິການສຶກສາ ລະດັບປະລິນຍາຕີ ເທົ່າກັບ ສປ ຈີນ.

**II. The nature of the school, school address, training methods and years, study area, graduation certificate, education certification**

1. Nature of the school: It is the only foreign-funded independent legal person undergraduate college in Laos, founded by Soochow University of China, approved by the Ministry of Education of China and Laos, and franchised by the Lao government. In September 2022, it was certified by the Overseas Study Service Center of the Ministry of Education of China.

2. School address: Xiangda Village, Saitha County, Vientiane, Capital of Laos.

3. Training methods and years: general full-time training, credit system training, the basic school duration is 4 years, the maximum training period is 6 years.

4. Study area: Mainly in Vientiane, the capital of Laos, and according to the regulations of the Ministry of Education of China, some courses can be studied in China.

5. Academic certificates: Graduates who meet the required credit requirements can obtain the graduation certificate and bachelor's degree certificate issued by Laos Soochow University approved by the Lao Ministry of Education and Sports.

6. Academic Certification: Lao Soochow University is an overseas university on the "white List" of the Chinese Education Service Center of the Ministry of Education, and its academic qualifications are recognized by the Chinese government, and the same treatment as domestic undergraduate degrees in China.

**二、学校性质、办学地址、培养方式与年限、就读地区、毕业证书、学历认证**

1. 学校性质：中国苏州大学创办的、中老两国教育部双向批准的、被老挝政府特许经营的、老挝唯一一所外资独立法人本科院校。2022 年 9 月，获得中国教育部留学服务中心学历认证。

2. 办学地址：老挝首都万象市，赛色塔县香达村。



สแกนด้วย CamScanner

3. 培养方式与年限：普通全日制，学分制培养，基本学制为 4 年，培养年限上限为 6 年。

4. 就读地区：主要就读于老挝首都万象，另根据中国教育部留学条例，可有部分课程在中国境内就读。

5. 学历证书：达到规定的学分要求申请毕业者，可获得老挝教育与体育部核准的老挝苏州大学颁发的毕业证书和学士学位证书。

6. 学历认证：老挝苏州大学系中国教育部留学服务中心“留学白名单”境外高校，其学历被中国政府认可，与中国国内本科学历学位同等待遇。

**III. ສາຂາ ວິຊາຮັບສະໝັກ:**

1. ສາຂາ ການເງິນສາກົນ: 30 ຄົນ
2. ສາຂາ ເສດຖະສາດ ແລະ ການຄ້າສາກົນ: 30 ຄົນ
3. ສາຂາ ພາສາຈີນ: 150 ຄົນ（ບໍ່ຮັບນັກສຶກສາຈີນ）
4. ສາຂາ ວິທະຍາສາດ ແລະ ເຕັກໂນໂລຊີ ຄອມພິວເຕີ: 30 ຄົນ（ບໍ່ຮັບນັກສຶກສາຈີນ）

**III. Enrollment Major:**

1. Finance major: 30 people
2. International Economics and Trade: 30 students
3. Chinese Language major: 150 students (no Chinese students)
4. Computer Science and Technology major: 30 students (not Chinese students)

三、招生专业：

1. 金融专业：30 人
2. 国际经济与贸易专业：30 人
3. 中国语言专业：150 人（不招中国籍学生）
4. 计算机科学与技术专业：30 人（不招中国籍学生）

**IV. ກຸ່ມເປົ້າໝາຍການຮັບສະໝັກນັກສຶກສາ**

1. ບໍ່ຈຳກັດປະເທດ, ຖືໜັງສືຜ່ານແດນທີ່ຖືກຕ້ອງຕາມກົດໝາຍ, ມີສຸຂະພາບແຂງແຮງ, ມີຄຸນສົມບັດດີ, ບໍ່ມີປະຫວັດຕ້ອງໂທດ ແລະ ມີຄວາມສາມາດດຳລົງຊີວິດດ້ວຍຕົນເອງ.

2. ເປັນນັກສຶກສາຈົບມັດທະຍົມຕອນປາຍ（ມໍ 7）ຂອງປີນີ້ ຫຼື ປີຜ່ານໆມາ.

3. ເປັນນັກສຶກສາ ທີ່ຈົບການສຶກສາລະດັບອະນຸປະລິນຍາຂອງປີນີ້ ຫຼື ປີຜ່ານໆມາ.

**IV. Enrollment target:**

1. Any nationality, legal passport holder, physical and mental health, good moral



สแกนด้วย CamScanner

character, no criminal record, independent living ability.

2. Regular high school graduates or previous graduates.

3. Recent or previous Associate degree graduates.

**四、招生对象：**

1. 不限国籍，持合法护照，身心健康，品德良好，无犯罪记录，有独立生活能力。

2. 普通高中应届毕业生或往届毕业生。

3. 副学士应届毕业生或往届毕业生。

**V. ຈຸດພິເສດ（ຈຸດເດັ່ນ）ຂອງມະຫາວິທະຍາໄລ**

1.ໄດ້ຮັບການຮອງຮັບຈາກທາງການ, ມີຄວາມໜ້າເຊື່ອຖື

ມະຫາວິທະຍາໄລ ຊູໂຈ ລາວ ເປັນມະຫາວິທະຍາໄລ ທີ່ຂຶ້ນຢູ່ໃນ "ລາຍຊື່ທີ່ໄດ້ຮັບອະນຸຍາດການສຶກສາຕໍ່ຕ່າງປະເທດ" ຂອງສູນບໍລິການ ການສຶກສາຕໍ່ຕ່າງປະເທດ ກະຊວງສຶກສາທະການ ສປ ຈີນ, ນັກສຶກສາ, ຫຼັງຈາກໄດ້ຮັບໃບປະກາສະນີຍະບັດ ຈາກມະຫາວິທະຍາໄລ ຊູໂຈ ລາວ ແລ້ວ ສາມາດຂໍດຳເນີນການຂຶ້ນທະບຽນຮັບຮອງວຸດທິດການສຶກສາ ຈາກສູນບໍລິການ ການສຶກສາຕໍ່ຕ່າງປະເທດ ກະຊວງສຶກສາທິການ ສປ ຈີນໄດ້.

2. ເປັນມະຫາວິທະຍາໄລ ທີ່ຖືກຕ້ອງຕາມລະບຽບກົດໝາຍ, ມີຫຼັກສູດທີ່ເປັນເອກະລັກພິເສດ ແລະ ໂດດເດັ່ນ.

ມະຫາວິທະຍາໄລ ຊູໂຈ ລາວ ເປັນມະຫາວິທະຍາໄລ ທີ່ໄດ້ຮັບສິດທິພິເສດໃນການເປີດການຮຽນ-ການສອນ ຈາກ ສປປ ລາວ ແລະ ເປັນມະຫາວິທະຍາໄລແຫ່ງດຽວ ທີ່ໃຊ້ພາສາຈີນໃນການສິດສອນ , ເຊິ່ງຈັດຂຶ້ນເປັນມະຫາວິທະຍາໄລ ແຫ່ງທີ 6 ຂອງປະເທດລາວ ແລະ ກໍເປັນມະຫາວິທະຍາໄລ ທີ່ຂຶ້ນຢູ່ໃນ "ລາຍຊື່ທີ່ໄດ້ຮັບອະນຸຍາດການສຶກສາຕໍ່ຕ່າງປະເທດ" ຂອງສູນບໍລິການ ການສຶກສາຕໍ່ຕ່າງປະເທດ ກະຊວງສຶກສາທິການ ສປ ຈີນ ຄືກັນກັບ ມະຫາວິທະຍາໄລ ແຫ່ງຊາດລາວ, ອາຈານສິດສອນແຕ່ລະວິຊາຮຽນທັງໝົດລ້ວນແລ້ວແຕ່ ແມ່ນຈັດສົ່ງມາຈາກມະຫາວິທະຍາໄລ ຊູໂຈ ຈີນ, ເຊິ່ງນຳໃຊ້ພາສາຈີນໃນການສິດ ສອນທັງໝົດ. ນອກນັ້ນ, ຍັງເພີ່ມບັນດາຄູອາຈານທີ່ມີຄວາມສາມາດໂດດເດັ່ນທາງດ້ານພາສາລາວເພື່ອເຕີມເຕັມການຮຽນ-ການສອນ, ນັກສຶກສາ ສາມາດເລືອກຮຽນພາສາລາວ ເປັນພາສາຕ່າງປະເທດພາສາທຳອິດຂອງຕົນເອງໄດ້.

3. ຄຳແນະນຳດ້ານສາຂາວິຊາ, ລົງເລິກການຮຽນ-ການສອນແບບ "ໜຶ່ງຕໍ່ໜຶ່ງ"

ມະຫາວິທະຍາໄລ ພວກເຮົາຈະມີຄູອາຈານທີ່ເປັນມືອາຊີບ ແລະ ມີປະສົບການທາງດ້ານການສິດສອນຫຼາຍປີ ເພື່ອມາປະກອບໃນການສິດສອນ ສົ່ງຄວາມຮູ້ ແລະ ແກ້ໄຂຂໍ້ຂັດຂ້ອງ ຫຼື ບັນຫາການຮຽນຮູ້ຂອງນັກຮຽນຢ່າງສະໝ່ຳສະເໝີ. ໃນຊ່ວງການຮຽນນັກສຶກສາ ສາມາດສຳພັດກັບຮູບແບບການ



สแกนด้วย CamScanner

ຮຽນ ໜຶ່ງຕໍ່ໜຶ່ງ, ໃຫ້ຄຳແນະນຳ ເພື່ອພັດທະນາການຮຽນຮູ້ໃນການຍົກລະດັບການສຶກສາ ແລະ ດ້ານວິຊາຊີບ, ເພື່ອວາງຮາກຖານການສຶກສາຕໍ່ ແລະ ພັດທະນາວິຊາຊີບ ໃນອານາຄົດ.

4. ຈຸດພິເສດຂອງສະຖານທີ່ ແລະ ຄ່າໃຊ້ຈ່າຍ:

ປະເທດລາວເປັນປະເທດສັງຄົມນິຍົມ, ປະຊາຊົນດຳລົງຊີວິດລຽບງ່າຍ, ສະຫງົບ ແລະ ປອດໄພ, ຄ່າຄອງຊີບຕ່ຳ. ການສຶກສາຕໍ່ຕ່າງປະເທດ ຖ້າຫາກສົມທຽບກັບປະເທດອື່ນໆແລ້ວ ສາມາດຮັບປະກັນຄວາມປອດໄພ ສ່ວນຄ່າໃຊ້ຈ່າຍໂດຍລວມປະຫຍັດຫຼາຍກວ່າເຄິ່ງ.

**V. Project Advantages:**

1. Official certification, reliable project qualification

Lao Soochow University is a "white list" university of the Ministry of Education of China. After students obtain the Soochow University certificate, they can obtain the degree certification in the Service Center of the Ministry of Education of China.

2. Legal universities with outstanding curriculum advantages

Lao Soochow University is a national franchise in Laos, the only Chinese-language teaching, is one of the six undergraduate institutions in Laos, and Lao National University is one of the "Study abroad white list" universities of the Chinese Ministry of Education Service Center. All courses are taught in Chinese by teachers from Soochow University. With excellent Laotian language teachers, students can choose Laotian as their first foreign language.

3. Professional guidance, "one-to-one" further study service

The program is equipped with senior overseas study instructors with many years of industry experience, who regularly answer questions and answer questions for students. Students enjoy one-to-one personalized and professional guidance for further study and career development during their stay at school, laying the foundation for further study and career development in the future.

4.Geographical and cost advantages

Laos is a socialist country, the people are simple, safe and stable, low consumption. Compared with other countries to study abroad, personal safety is guaranteed, the cost is reduced by at least half.

**五、学校优势：**

1. 官方认证，项目资质可靠

老挝苏州大学是中国教育部留学服务中心“留学白名单”高校，学生取得老挝苏州大学学历证书后，可在中国教育部留学服务中心进行学历学位认证。

2. 合法高校，课程优势突出



สแกนด้วย CamScanner

老挝苏州大学是老挝国家特许经营、唯一以中文授课、系老挝国家6所本科院校之一，与老挝国立大学同为中国教育部留学服务中心“留学白名单”高校。全部课程教师由苏州大学派出，纯中文授课。同时配备优秀的老挝语教师，学生可以选择老挝语作为第一外语。

3. 专业指导，“一对一”深造服务

项目配备具有多年行业经验的资深留学指导老师，定期为学生答疑解惑。学生在校期间享受一对一个性化、专业化的升学与生涯发展指导，为日后继续深造及生涯发展奠定基础。

4. 地域及费用优势

老挝是社会主义国家，民风淳朴、安全稳定、消费低。同比其他国家留学，人身安全有保障、费用至少减省一半。

**VI. ວິຊາສອບເສັງ**

ນັກສຶກສາລາວ ແລະ ນັກສຶກສາຕ່າງປະເທດ ວິຊາສອບເສັງ: ຄະນິດສາດ; ຄວາມຮູ້ທົ່ວໄປ; ພາສາຈີນ

ນັກສຶກສາຈີນ ວິຊາສອບເສັງ: ວັນນະຄະດີຈີນ; ຄະນິດສາດ; ພາສາອັງກິດ

**VI. Examination Subjects:**

Candidates from Laos and other countries, the test subjects are: Mathematics, general, Chinese

Chinese candidates, test subjects: Chinese, math, English

**六、考试科目：**

老挝及其他国家考生，考试科目为：数学、综合、中文

中国考生，考试科目为：语文、数学、英语

**VII.ວັນທີສະໝັກ ແລະ ລາຍລະອຽດການຄັດເລືອກເຂົ້າຮຽນ**

1. ວັນທີສະໝັກ:

ເລີ່ມແຕ່ມື້ນີ້ຈົນເຖິງ 30 ກັນຍາ 2024

2. ການສະໝັກ ແລະ ລາຍລະອຽດການຄັດເລືອກເຂົ້າຮຽນ:

ຜູ້ສະໝັກສາມາດສະໝັກຜ່ານບັນຊີ WeChat ຂອງ “ມະຫາວິທະຍາໄລ ຊູໂຈ ລາວ ” ເພື່ອຕື່ມ《ຟອມສະໝັກເຂົ້າຮຽນ》ຈາກນັ້ນສົ່ງຟອມສະໝັກ--ໂຮງຮຽນປະເມີນ ແລະ ກວດສອບເອກະສານ--ເອກະສານຜູ້ສະໝັກທີ່ຜ່ານການກວດສອບຈະໄດ້ເຂົ້າສອບເສັງການຂຽນ ແລະ ສຳພາດ--ໂຮງຮຽນເຮັດການປະເມີນ ແລະ ໃຫ້ຄະແນນ, ຈາກນັ້ນຢືນຢັນການຮັບເຂົ້າຮຽນ ຫຼື ບໍ່--ຫຼັງຈາກຮັບເຂົ້າຮຽນ ໂຮງຮຽນຈະສົ່ງໜັງສືຕອບຮັບຊົ່ວຄາວ--ຈາກນັ້ນລວບລວມລາຍງານ ແລະ ເອກະສານທີ່ກ່ຽວຂ້ອງລາຍງານເຖິງ



สแกนด้วย CamScanner

ກະຊວງສຶກສາທິການ ແລະ ກິລາ ລາວ ເພື່ອຂໍອະນຸມັດ--ຈາກນັ້ນຈຶ່ງຈະສົ່ງໜັງສືຕອບຮັບຢ່າງເປັນທາງການ--ຕໍ່ມາ ແຈ້ງການເຖິງນັກສຶກສາ ກະກຽມ ພັສປອດ, ວີຊ່າ ແລະ ຊໍາລະຄ່າຮຽນ--ສຸດທ້າຍມາລາຍງານໂຕ ແລະ ຕື່ມແບບຟອມ ປະກອບເອກະສານຕ່າງໆເພື່ອເຂົ້າຮຽນ.

**VII. Application time and selection procedure**

1. Application time:

From now until September 30, 2024

2. Application and selection process:

Applicants through the official wechat public number "Lao Soochow University" fill in the "Application for Admission" to submit the application -- the school review materials -- notify the applicants who have passed the review to participate in the written test, interview -- the school comprehensive evaluation, decide whether to admit -- to be admitted, Issue pre-admission offer - After submitting to the Lao Ministry of Education and Sports for approval - issue formal offer - notify candidates to apply for passports, visas, payment - to apply for admission to the school.

**七、申请时间及选拔程序**

1. 申请时间：

即日起至 2024 年 9 月 30 日

2. 申请及选拔流程：

申请人通过官方微信公众号“老挝苏州大学”填写《入学申请书》提交申请——学校审核材料---通知审核通过的申请人参加笔试、面试——学校综合评价，决定是否录取———拟录取的，发放预录取 offer——报送老挝教育与体育部核准后——发放正式 offer——通知考生办理护照、签证、缴费——来校办理入学。

**VIII. ເອກະສານປະກອບຂອງນັກສຶກສາ ໃນການລົງທະບຽນເຂົ້າຮຽນ**

1. 《ຟອມສະໝັກເຂົ້າຮຽນ》 ສະບັບເຈ້ຍ
2. ກ໋ອບປີ້ສີ ບັດປະຈໍາໂຕ, ພັສປອດ ຫຼື ສໍາມະໂນຄົວ.
3. ຮູບຕິດບັດພື້ນຟ້າຄະໜາດ 3x4 ຈໍານວນ 6 ໃບ.
4. ກ໋ອບປີ້ສີ ໃບປະກາດ ມໍ7 ຫຼື ໃບປະກາດອະນຸປະລິນຍາ
5. ກ໋ອບປີ້ສີ ໃບຄະແນນ ມໍ7 ຫຼື ໃບຄະແນນອະນຸປະລິນຍາ
6. ໃບນໍາສົ່ງຈາກໂຮງຮຽນທີ່ຮຽນຈົບ ຕົ້ນສະບັບ.

**VIII. Materials required for students to apply for admission to the University:**

1. Paper version of Admission Application Form
2. Original and copy of ID card and passport



สแกนด้วย CamScanner

3.2-inch headless color photos (3.5×4.5 cm)

4. Original and photocopy of high school graduation certificate and vocational college graduation certificate

5. Original and photocopy of high school graduation transcript or HKCEE transcript

6. Original letter of recommendation from graduation school

八、学生来校办理入学需提交的材料：

1. 《入学申请表》纸质版

2. 身份证和护照原件、复印件

3. 2 吋正面免冠彩色照片 6 张（3.5×4.5 厘米）

4. 高中毕业证书、高职院校毕业证书原件、复印件

5. 高中毕业成绩单或会考成绩单原件、复印件

6. 毕业学校推荐信原件

ມະຫາວິທະຍາໄລ ຊູໂຈ ລາວ
ກໍລະກົດ 2024

Lao Soochow University
July 2024

老挝苏州大学
2024 年 7 月



สแกนด้วย CamScanner